ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ເລກທີ 4050/ກງ

ນະຄອນຫລວງວຽງຈັນ, ວັນທີ 01 DEC 2015

# ຄຳແນະນຳ
# ຂອງລັດຖະມົນຕີວ່າການກະຊວງການເງິນ
# ກ່ຽວກັບອາກອນຊົມໃຊ້ຍານພາຫະນະ

- ອີງຕາມກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບເລກທີ 05/ສພຊ, ລົງວັນທີ 20 ທັນວາ 2011;
- ອີງຕາມມະຕິກອງປະຊຸມຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 0137/ຄປຈ, ລົງວັນທີ 04 ພະຈິກ 2015;
- ອີງດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 80/ນຍ, ລົງວັນທີ 28 ກຸມພາ 2007, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງການເງິນ;
- ອີງຕາມການເຫັນດີເປັນເອກະພາບຂອງຄະນະນຳກະຊວງການເງິນ.

ເພື່ອຈັດຕັ້ງປະຕິບັດມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 0137/ຄປຈ, ລົງວັນທີ 04 ພະຈິກ 2015 ວ່າດ້ວຍການທົດລອງການນຳໃຊ້ອັດຕາອາກອນຊົມໃຊ້ຍານພາຫະນະ ສຳລັບການນຳເຂົ້າ, ການຜະລິດ ຫຼື ການປະກອບ ແລະ ການຈຳໜ່າຍ ໃຫ້ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ.

ລັດຖະມົນຕີວ່າການກະຊວງການເງິນ ອອກຄຳແນະນຳ:

1. ການຈັດຕັ້ງປະຕິບັດຄຳແນະນຳສະບັບນີ້ ແມ່ນ ເພື່ອທົດລອງນຳໃຊ້ອັດຕາອາກອນຊົມໃຊ້ຍານພາຫະນະທຸກປະເພດ ໃນການຄິດໄລ່ ຈັດເກັບ ຫຼື ການຍົກເວັ້ນສຳລັບການນຳເຂົ້າ, ການຜະລິດ, ການປະກອບ ແລະ ການສົ່ງອອກ.
2. ຄວາມໝາຍຂອງຄຳສັບທີ່ນຳໃຊ້ໃນຄຳແນະນຳສະບັບນີ້ ມີດັ່ງນີ້:
   2.1 ຍານພາຫະນະ ໝາຍເຖິງ ວັດຖຸ ຫຼື ສິ່ງປະດິດທີ່ບໍ່ແມ່ນສິ່ງທີ່ມີຊີວິດ, ສາມາດເຄື່ອນຍ້າຍຂົນສົ່ງໄປໄດ້; ຖືກສ້າງຂຶ້ນໂດຍມະນຸດເຊັ່ນ: ລົດຖີບ, ລົດຈັກ, ລົດຂົນສົ່ງ, ຫົວລົດໄຟ, ເຮືອ, ເຮືອບິນ (ບິນ) ເຫຼົ່ານີ້ເປັນຕົ້ນ;

2.2 ຍານພາຫະນະຂົນສົ່ງ ໝາຍເຖິງ ພາຫະນະຂົນສົ່ງທຸກປະເພດແລ່ນດ້ວຍເຄື່ອງຈັກທີ່ນຳໃຊ້ພະລັງງານເຊື້ອໄຟ ຫຼື ພະລັງງານສະອາດ;

2.3 ລົດຈັກ ໝາຍເຖິງ ຍານພາຫະນະຂັບເຄື່ອນດ້ວຍສອງລໍ້ຂຶ້ນໄປ ແລ່ນດ້ວຍເຄື່ອງຈັກທີ່ນຳໃຊ້ພະລັງງານເຊື້ອໄຟ ຫຼື ພະລັງງານສະອາດ;

2.4 ລົດຂົນສົ່ງຂະໜາດນ້ອຍ ໝາຍເຖິງ

- ລົດຂົນສົ່ງຜູ້ໂດຍສານ ຊຶ່ງມີບ່ອນນັ່ງທັງໝົດບໍ່ເກີນເກົ້າຄົນ (9 ຄົນ);
- ລົດຂົນສົ່ງສິນຄ້າຊຶ່ງມີນໍ້າໜັກທັງໝົດບໍ່ເກີນ ສາມໂຕນເຄິ່ງ (3,5 ໂຕນ).

2.5 ລົດຂົນສົ່ງຂະໜາດກາງ ໝາຍເຖິງ

- ລົດຂົນສົ່ງຜູ້ໂດຍສານ ຊຶ່ງມີບ່ອນນັ່ງແຕ່ ສິບຄົນ(10 ຄົນ) ຫາສາມສິບຫ້າຄົນ (35 ຄົນ);
- ລົດຂົນສົ່ງສິນຄ້າຊຶ່ງມີນໍ້າໜັກເກີນສາມໂຕນເຄິ່ງ(3,5 ໂຕນ) ຫາສິບຫ້າໂຕນ (15 ໂຕນ).

2.6 ລົດຂົນສົ່ງຂະໜາດໃຫຍ່ ໝາຍເຖິງ

- ລົດຂົນສົ່ງຜູ້ໂດຍສານ ຊຶ່ງມີບ່ອນນັ່ງທັງໝົດແຕ່ສາມສິບຫົກຄົນ(36 ຄົນ ) ຂຶ້ນໄປ;
- ລົດຂົນສົ່ງສິນຄ້າຊຶ່ງມີນໍ້າໜັກເກີນສິບຫ້າໂຕນ(15ໂຕນ) ຫາຫ້າສິບໂຕນ ( 50 ໂຕນ ).

2.7 ລົດກົນຈັກໜັກ ໝາຍເຖິງ ຍານພາຫະນະກົນຈັກທີ່ຮັບໃຊ້ໃນຂົງເຂດອຸດສະຫາກຳຕ່າງໆເຊັ່ນ: ການກໍ່ສ້າງ, ການຂຸດຄົ້ນບໍ່ແຮ່, ການຍົກຍ້າຍ ແລະຄ່ຽນຖ່າຍ, ການບົດໄມ້, ການຜະລິດເບຕົງ, ການປູພື້ນ, ການປູຢາງ, ການທັບມ້າງ, ການຜະລິດກະສິກຳ ແລະອຸດສາຫະກຳປຸງແຕ່ງ, ການບໍລິການສາທາລະນະ(ວຽກງານໂຍທາ) ແລະອະນາໄມຕົວເມືອງ ແລະອື່ນໆ;

2.8 ພະລັງງານເຊື້ອໄຟ ໝາຍເຖິງ ສິ່ງທີ່ພາໃຫ້ເຄື່ອງຈັກເກີດຄວາມແຮງດ້ວຍການນຳໃຊ້ພະລັງງານທີ່ເປັນທາດແຫຼວ ເປັນຕົ້ນ ນໍ້າມັນເຊື້ອໄຟທຸກຊະນິດ ແລະ ອາຍແກັສ;

2.9 ພະລັງງານສະອາດ ໝາຍເຖິງ ພະລັງງານທົດແທນທີ່ບໍ່ສົ່ງຜົນກະທົບຕໍ່ສະພາບແວດລ້ອມ ແລະສັງຄົມ ເປັນຕົ້ນ ພະລັງງານໄຟຟ້າ, ພະລັງງານແສງຕາເວັນ;

2.10 ຍານພາຫະນະທີ່ນຳໃຊ້ພະລັງງານສະອາດ ໝາຍເຖິງ ຍານພາຫະນະທີ່ອອກແບບສະເພາະເພື່ອນຳໃຊ້ພະລັງງານສະອາດໂດຍກົງ ຊຶ່ງບໍ່ລວມເອົາຍານພາຫະນະ ທີ່ນຳໃຊ້ພະລັງງານສອງລະບົບ ເປັນຕົ້ນ ນໍ້າມັນເຊື້ອໄຟ ແລະ ພະລັງງານທົດແທນອື່ນ(ລະບົບຮາຍບຼິດ-Hybrid).

**3. ຍານພາຫະນະທີ່ຖືກຄິດໄລ່ຕາມອັດຕາອາກອນຊົມໃຊ້ ປະກອບມີ :**

3.1 ລົດຈັກ ສອງລໍ້, ສາມລໍ້, ສີ່ລໍ້ ທີ່ໃຊ້ພະລັງງານເຊື້ອໄຟ ແລະພະລັງງານສະອາດ ລວມທັງລົດຖີບທີ່ມີລະບົບຂັບເຄື່ອນດ້ວຍເຄື່ອງຈັກ.

3.2 ຍານພາຫະນະຂົນສົ່ງຂະໜາດນ້ອຍ:

- ລົດຂົນສົ່ງຜູ້ໂດຍສານ ຊຶ່ງມີບ່ອນນັ່ງທັງໝົດບໍ່ເກີນເກົ້າຄົນ (9 ຄົນ);
- ລົດຂົນສົ່ງສິນຄ້າຊຶ່ງມີນໍ້າໜັກທັງໝົດບໍ່ເກີນ ສາມໂຕນເຄິ່ງ (3,5 ໂຕນ).

3.3 ລົດຂົນສົ່ງຂະໜາດກາງ :

- ລົດຂົນສົ່ງຜູ້ໂດຍສານ ຊຶ່ງມີບ່ອນນັ່ງແຕ່ ສິບຄົນ(10 ຄົນ) ຫາສາມສິບຫ້າຄົນ (35 ຄົນ);
- ລົດຂົນສົ່ງສິນຄ້າຊຶ່ງມີນໍ້າໜັກເກີນສາມໂຕນເຄິ່ງ(3,5 ໂຕນ) ຫາສິບຫ້າໂຕນ (15 ໂຕນ).

3.4 ລົດຂົນສົ່ງຂະໜາດໃຫຍ່ :

- ລົດຂົນສົ່ງຜູ້ໂດຍສານ ຊຶ່ງມີບ່ອນນັ່ງທັງໝົດແຕ່ສາມສິບຫົກຄົນ(36 ຄົນ ) ຂຶ້ນໄປ;
- ລົດຂົນສົ່ງສິນຄ້າຊຶ່ງມີນ້ຳໜັກເກີນສິບຫ້າໂຕນ(15ໂຕນ ) ຫາຫ້າສິບໂຕນ ( 50 ໂຕນ ).

3.5 ຊິ້ນສ່ວນປະກອບ, ເຄື່ອງອາໄຫລ່ປ່ຽນຖ່າຍ ລົດຈັກທຸກປະເພດ ແລະ ລົດຂົນສົ່ງທຸກຂະໜາດ.

4. ຍານພາຫະນະທີ່ບໍ່ຖືກຄິດໄລ່ຕາມອັດຕາອາກອນຊົມໃຊ້ ປະກອບມີ :

4.1 ລົດຖີບ;

4.2 ຫົວລົດໄຟ;

4.3 ເຮືອບິນ (ຍົນ);

4.4 ຍານພາຫະນະທີ່ຕິດຕັ້ງອອກແບບສຳລັບການກູ້ໄພ;

4.5 ຍານພາຫະນະສຳລັບການມອດໄຟ ( ດັບເພີງ );

4.6 ຍານພາຫະນະສຳລັບຮັບໃຊ້ຄົນພິການ;

4.7 ຍານພາຫະນະສຳລັບຮັບໃຊ້ສາທາລະນະເຊັ່ນ: ລົດຂົນສົ່ງຂີ້ເຫຍື້ອ, ລົດດູດຝຸ່ນ, ລົດອະນາໄມຕົວເມືອງ ແລະອື່ນໆທີ່ຄ້າຍຄຽງທີ່ອອກແບບມາໂດຍສະເພາະ;

4.8 ຍານພາຫະນະຮັບໃຊ້ກະສິກຳເຊັ່ນ: ລົດໄຖ, ລົດປັກດຳ, ລົດກ່ຽວ, ລົດຫວ່ານ, ລົດປອດເມັດຫຼືປອດລຳ ແລະອື່ນໆ ທີ່ຄ້າຍຄຽງ ( ບໍ່ລວມລົດຂົນສົ່ງຜົນຜະລິດກະສິກຳ);

4.9 ຍານພາຫະນະກົນຈັກໜັກທີ່ຮັບໃຊ້ການກໍ່ສ້າງ, ການຂຸດຄົ້ນບໍ່ແຮ່, ການຍົກຍໍ ແລະຄ່ຽນຖ່າຍ, ການບົດໄມ້, ການຜະລິດເບຕົງ, ການປູພື້ນ, ການປູຢາງ, ການທັບມ້າງ ແລະ ກົນຈັກໜັກທົ່ວໄປ ເຊັ່ນ: ລົດຕັກ, ລົດຈົກ-ຕັກ, ລົດກວາດ, ລົດດູດ, ລົດເຄຣນ, ລົດໂລ, ລົດຍົກຍໍ ( ຟອກລິບ) ແລະກົນຈັກໜັກອື່ນໆທີ່ຄ້າຍຄຽງ;

4.10 ຍານພາຫະນະ ທີ່ນຳເຂົ້າເພື່ອສົ່ງອອກຕໍ່ ແລະ ຍານພາຫະນະທີ່ຜະລິດ ຫຼື ປະກອບຢູ່ພາຍໃນປະເທດ ທີ່ສົ່ງອອກໄປຈຳໜ່າຍຢູ່ຕ່າງປະເທດ;

4.11 ຍານພາຫະນະ ທີ່ນຳເຂົ້າ ແລະຈຳໜ່າຍ ໃຫ້ແກ່ການຈັດຕັ້ງທາງການທູດ, ການຈັດຕັ້ງສາກົນ, ການຈັດຕັ້ງຕ່າງປະເທດ ທີ່ບໍ່ສັງກັດລັດຖະບານ ຫຼື ຊ່ຽວຊານຕ່າງປະເທດ ປະຈຳໂຄງການຕ່າງໆຂອງລັດຖະບານ ໂດຍໄດ້ຮັບການຢັ້ງຢືນ ແລະ ການອະນຸມັດ ຈາກຂະແໜງການກ່ຽວຂ້ອງ.

5. ພື້ນຖານຄິດໄລ່ອາກອນຊົມໃຊ້ມີດັ່ງນີ້:

5.1 ສຳລັບການນຳເຂົ້າ ຍານພາຫະນະ, ສິ້ນສ່ວນປະກອບ, ເຄື່ອງອາໄຫລ່ປ່ຽນຖ່າຍ ແມ່ນລວມມີມູນຄ່າແຈ້ງພາສີ ບວກຄ່າພາສີ ( ຖ້າມີ ), ສ່ວນລະບຽບການກຳນົດມູນຄ່າແຈ້ງພາສີ ແມ່ນໄດ້ກຳນົດໄວ້ໃນບົດແນະນຳຂອງລັດຖະມົນຕີວ່າການກະຊວງການເງິນ ສະບັບເລກທີ 1537/ກງ, ລົງວັນທີ 4 ມິຖຸນາ 2012.

5.2 ສິ້ນສ່ວນປະກອບ, ເຄື່ອງອາໄຫລ່ປ່ຽນຖ່າຍ ທີ່ຊື້ຈາກໂຮງງານຜະລິດຢູ່ພາຍໃນປະເທດ, ພື້ນຖານຄິດໄລ່ອາກອນຊົມໃຊ້ ແມ່ນລາຄາຂາຍອອກ ຂອງໂຮງງານ (ບໍ່ລວມເອົາມູນຄ່າອາກອນຊົມໃຊ້ ແລະ ອາກອນມູນຄ່າເພີ່ມ ເຂົ້ານຳ);

5.3 ສິ້ນສ່ວນປະກອບທີ່ໂຮງງານປະກອບຍານພາຫະນະຜະລິດເອງ, ພື້ນຖານຄິດໄລ່ອາກອນຊົມໃຊ້ ແມ່ນມູນຄ່າຕົ້ນທຶນຂອງການຜະລິດສິ້ນສ່ວນປະກອບຍານພາຫະນະ.

6. ວິທີຄິດໄລ່ອາກອນຊົມໃຊ້ ສຳລັບການນຳເຂົ້າຈາກຕ່າງປະເທດ :

6.1 <u>ການຄິດໄລ່ ອາກອນຊົມໃຊ້ສຳລັບພາຫະນະນຳເຂົ້າເປັນຄັນ ( CBU ) :</u>

- ມູນຄ່າແຈ້ງພາສີ ຄູນ ອັດຕາພາສີ ( ຖ້າມີ );
- ມູນຄ່າແຈ້ງພາສີ ບວກຄ່າພາສີ ( ຖ້າມີ ) ຄູນອັດຕາອາກອນຊົມໃຊ້ຕາມແຕ່ລະປະເພດ ພາຫະນະ;

**<u>ຕົວຢ່າງ</u>**: ບໍລິສັດ (ກໍ) ຈຳກັດ ນຳເຂົ້າລົດກະບະ ຄວາມແຮງ 3,000 ເຊເຊ ຈາກຕ່າງປະເທດ ທີ່ມີມູນຄ່າແຈ້ງພາສີ : 25,427 ໂດລາສະຫະລັດຕໍ່ຄັນ:

**★ ກໍລະນີອັດຕາພາສີ 0% ວິທີຄິດໄລ່ດັ່ງນີ້ :**

- ມູນຄ່າແຈ້ງພາສີ : 25,427 ໂດລາສະຫະລັດຕໍ່ຄັນ x 8,000 ກີບ = **203,416,000 ກີບ**
- ຄ່າພາສີຂາເຂົ້າ : 203,416,000 ກີບ x 0% = **0 ກີບ**
- ຄ່າອາກອນຊົມໃຊ້ : (203,416,000 ກີບ + 0 ກີບ) x 45% = **91,537,200 ກີບ**

**★ ກໍລະນີມີອັດຕາພາສີ ວິທີຄິດໄລ່ດັ່ງນີ້ :**

- ມູນຄ່າແຈ້ງພາສີ : 25,427 ໂດລາສະຫະລັດຕໍ່ຄັນ x 8,000 ກີບ = **203,416,000 ກີບ**
- ຄ່າພາສີຂາເຂົ້າ : 203,416,000 ກີບ x 30% = **61,024,800 ກີບ**
- ອາກອນຊົມໃຊ້ ຂາເຂົ້າ : (203,416,000 ກີບ + 61,024,800ກີບ )x 45%

  = **118,998,360 ກີບ**

**6.2 ສິ້ນສ່ວນປະກອບ ແລະອາໄຫລ່ປ່ຽນຖ່າຍ:**

**<u>ຕົວຢ່າງ1</u>**: ບໍລິສັດ ປະກອບພາຫະນະ ກໍ ນຳເຂົ້າສິ້ນສ່ວນລົດປະກອບຮູບແບບ (IKD) ດັ່ງນີ້ :

- ສິ້ນສ່ວນລົດປະກອບຊຸດຄັນ ລົດເກັງ ຄວາມແຮງ 1,591 ເຊເຊ ມູນຄ່າແຈ້ງພາສີ 9,229 ໂດລາສະຫະລັດ.

**★ ກໍລະນີອັດຕາພາສີ 0% ວິທີຄິດໄລ່ດັ່ງນີ້ :**

- ມູນຄ່າແຈ້ງພາສີ : 9,229 ໂດລາສະຫະລັດຕໍ່ຄັນ x 8,000 ກີບ = **73,832,000 ກີບ**
- ຄ່າພາສີຂາເຂົ້າ : **73,832,000ກີບ** x 0% = **0 ກີບ**
- ຄ່າອາກອນຊົມໃຊ້ : **(73,832,000**ກີບ + 0 ກີບ) x 5% = **3,691,600 ກີບ**

**★ ກໍລະນີມີອັດຕາພາສີ ວິທີຄິດໄລ່ດັ່ງນີ້ :**

- ມູນຄ່າແຈ້ງພາສີ : 9,229 ໂດລາສະຫະລັດຕໍ່ຄັນ x 8,000 ກີບ = 73,832,000ກີບ
- ຄ່າພາສີຂາເຂົ້າ : 73,832,000ກີບX 40% = **29,352,800ກີບ**
- ອາກອນຊົມໃຊ້ ຂາເຂົ້າ : **(73,832,000**ກີບ + **7,383,200**ກີບ )x 5%

  = **5,136,740ກີບ.**

**<u>ຕົວຢ່າງ2</u>**: ບໍລິສັດ (ກໍ) ນຳເຂົ້າອາໄຫລ່ປ່ຽນຖ່າຍ ດັ່ງນີ້ :

- ຈັກລົດເກັງ ( ຈັກເອັດຊັງ ) ຄວາມແຮງ 1,591 ເຊເຊ ມູນຄ່າແຈ້ງພາສີ 2,000 ໂດລາ ສະຫະລັດ.

* ກໍລະນີອັດຕາພາສີ 0% ວິທີຄິດໄລ່ດັ່ງນີ້ :
  - ມູນຄ່າແຈ້ງພາສີ :2,000 ໂດລາສະຫະລັດຕໍ່ຄັນ x 8,000 ກີບ = 16,000,000 ກີບ
  - ຄ່າພາສີຂາເຂົ້າ :16,000,000ກີບ x 0% = 0 ກີບ
  - ຄ່າອາກອນຊົມໃຊ້ : (16,000,000ກີບ + 0 ກີບ) x 5% = 800,000 ກີບ
* ກໍລະນີມີອັດຕາພາສີ ວິທີຄິດໄລ່ດັ່ງນີ້ :
  - ມູນຄ່າແຈ້ງພາສີ :2,000 ໂດລາສະຫະລັດຕໍ່ຄັນ x 8,000 ກີບ = 16,000,000ກີບ
  - ຄ່າພາສີຂາເຂົ້າ :16,000,000ກີບ x 40% = 6,400,000ກີບ
  - ອາກອນຊົມໃຊ້ ຂາເຂົ້າ :(16,000,000ກີບ + 6,400,000ກີບ )x 5%

    = 1,120,000ກີບ.

7. ວິທີຄິດໄລ່ອາກອນຊົມໃຊ້ ສຳລັບ ສິ້ນສ່ວນ ແລະເຄື່ອງອາໄຫລ່ ທີ່ຜະລິດຢູ່ພາຍໃນປະເທດ ແມ່ນເອົາລາຄາຂາຍອອກຈາກໂຮງງານ ຄູນອັດຕາອາກອນຊົມໃຊ້.

   ຕົວຢ່າງ 1: ບໍລິສັດປະກອບລົດ ກ ຊື້ສິ້ນສ່ວນຈາກໂຮງງານຜະລິດ ຂ ເພື່ອມາປະກອບລົດເປັນຄັນ, ມູນຄ່າຂາຍອອກຈາກໂຮງງານ: 200,000,000 ກີບ.

ວິທີຄິດໄລ່ເກັບອາກອນ:

- ອກຊ: 200,000,000 ກີບ x 5%= 10,000,000 ກີບ

ຕົວຢ່າງ 2: ໂຮງງານຜະລິດອາໄຫລ່ ກ ຂາຍເຄື່ອງອາໄຫລ່ປ່ຽນຖ່າຍໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ສຳລັບຊົມໃຊ້ ຫລື ຈຳໜ່າຍ, ໂຮງງານຜະລິດ ກ ຕ້ອງຄິດໄລ່ອາກອນຊົມໃຊ້ເຂົ້າໃນລາຄາຂາຍ ດັ່ງນີ້:

ອາໄຫລ່ 1 ລາຍການ ຂາຍອອກຈາກໂຮງງານລາຄາ: 2,000,000 ກີບ ໃນໃບເກັບເງິນຕ້ອງຄິດໄລ່ອາກອນຊົມໃຊ້: 2,000,000 ກີບ x 5% = 100,000 ກີບ

ລາຄາຂາຍອອກທີ່ບໍ່ມີອາກອນມູນຄ່າເພີ່ມ: 2,100,000 ກີບ.

8. ອັດຕາອາກອນຊົມໃຊ້ຍານພາຫະນະ, ສິ້ນສ່ວນປະກອບ ແລະເຄື່ອງອາໄຫລ່ປ່ຽນຖ່າຍເປັນສ່ວນຮ້ອຍ(%) ດັ່ງນີ້:

| ລ/ດ | ປະເພດຍານພາຫະນະ | ຄວາມແຮງ (ຊີຊີ) | ອັດຕາອາກອນຊົມໃຊ້ເປັນສ່ວນຮ້ອຍ (%) |
|---|---|---|---|
| 1 | ລົດຈັກ | | |
| | 1.1 ລົດຈັກ ທີ່ນຳໃຊ້ພະລັງງານເຊື້ອໄຟ | ແຕ່ 110 ຊີຊີ ລົງມາ | 20 |
| | | ແຕ່ 111 - 150 ຊີຊີ | 30 |
| | | ແຕ່ 151 - 250 ຊີຊີ | 40 |
| | | ແຕ່ 251 - 500 ຊີຊີ | 60 |
| | | ແຕ່ 501 - 1.000 ຊີຊີ | 80 |

| | | | |
|---|---|---|---|
| | 1.2 ລົດຈັກ ທີ່ນຳໃຊ້ພະລັງງານສະອາດ | | 5 |
| | 1.3 ສິ້ນສ່ວນປະກອບ, ເຄື່ອງອາໄຫລ່ ປ່ຽນຖ່າຍ ລົດຈັກ ທຸກປະເພດ | | 5 |
| 2 | **ລົດຂົນສົ່ງຂະໜາດນ້ອຍ** | | |
| | 2.1 ລົດຂົນສົ່ງຂະໜາດນ້ອຍ: ລົດເກັງ, ລົດຈິບ, ລົດຕູ້, ລົດກະບະ ທີ່ນຳໃຊ້ພະລັງງານເຊື້ອໄຟ. | ແຕ່ 1.000 ເຊເຊ ລົງມາ<br>ແຕ່ 1.001 - 1.600 ເຊເຊ<br>ແຕ່ 1.601 - 2.500 ເຊເຊ<br>ແຕ່ 2.501 - 3.000 ເຊເຊ<br>ແຕ່ 3.001 - 4.000 ເຊເຊ<br>ແຕ່ 4.001 - 5.000 ເຊເຊ<br>ແຕ່ 5.001 - 6.000 ເຊເຊ<br>ແຕ່ 6.001 ຂຶ້ນໄປ | 25<br>30<br>35<br>40<br>45<br>70<br>80<br>90 |
| | 2.2 ລົດຂົນສົ່ງຂະໜາດນ້ອຍ:ລົດເກັງ, ລົດຈິບ, ລົດຕູ້, ລົດກະບະທີ່ນຳໃຊ້ພະລັງງານສະອາດ | | 10 |
| 3 | 1. ລົດຂົນສົ່ງຂະໜາດນ້ອຍ(ລົດກະບະສອງປະຕູ)ທີ່ລວງຍາວຂອງກະບະຍາວກວ່າຫ້າສິບສ່ວນຮ້ອຍ(50%)ຂອງຄວາມຍາວແຕ່ໃຈກາງລໍ້ໜ້າຫາລໍ້ຫລັງ:<br>- ທີ່ນຳໃຊ້ພະລັງງານເຊື້ອໄຟ<br>- ທີ່ນຳໃຊ້ພະລັງງານສະອາດ | | <br><br><br><br>8<br>5 |
| | **2.** ລົດຂົນສົ່ງຂະໜາດກາງ:<br>- ທີ່ນຳໃຊ້ພະລັງງານເຊື້ອໄຟ<br>- ທີ່ນຳໃຊ້ພະລັງງານສະອາດ | | <br>8<br>5 |
| | 3. ລົດຂົນສົ່ງຂະໜາດໃຫຍ່:<br>- ທີ່ນຳໃຊ້ພະລັງງານເຊື້ອໄຟ<br>- ທີ່ນຳໃຊ້ພະລັງງານສະອາດ | | <br>5<br>3 |
| 4 | ສິ້ນສ່ວນປະກອບ, ເຄື່ອງອາໄຫລ່ປ່ຽນຖ່າຍຂອງລົດຂົນສົ່ງ ທຸກຂະໜາດ | | 5 |

9. **ການແຈ້ງອາກອນຊົມໃຊ້ຍານພາຫະນະ**

ການແຈ້ງອາກອນຊົມໃຊ້ ໃຫ້ປະຕິບັດ ດັ່ງນີ້:

1. ບຸກຄົນ,ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ນຳເຂົ້າຍານພາຫະນະ, ສິ້ນສ່ວນປະກອບ ແລະ ເຄື່ອງອາໄຫລ່ປ່ຽນຖ່າຍ ຕ້ອງແຈ້ງເສຍອາກອນຊົມໃຊ້ ໃນເວລາດຽວກັນກັບການແຈ້ງພາສີເປັນລາຍລະອຽດຢູ່ດ່ານພາສີຊາຍແດນບ່ອນສິນຄ້ານຳເຂົ້າ. ສຳລັບການນຳເຂົ້າພາຫະນະເປັນຄັນ ແລະສິ້ນສ່ວນປະກອບພາຫະນະ ແມ່ນອະນຸຍາດໃຫ້ນຳເຂົ້າສະເພາະດ່ານພາສີສາກົນເທົ່ານັ້ນ.
2. ຜູ້ດຳເນີນທຸລະກິດການຜະລິດສິ້ນສ່ວນປະກອບ, ເຄື່ອງອາໄຫລ່ປ່ຽນຖ່າຍ ຢູ່ພາຍໃນປະເທດ ຕ້ອງຍື່ນໃບແຈ້ງເສຍອາກອນຊົມໃຊ້ ເປັນແຕ່ລະເດືອນ ບໍ່ໃຫ້ກາຍວັນທີ 15 ຂອງເດືອນຖັດໄປຕໍ່ຂະແໜງການສ່ວຍສາອາກອນບ່ອນທີ່ຕົນຂຶ້ນກັບ.

10. **ການມອບອາກອນຊົມໃຊ້ຍານພາຫະນະ, ສິ້ນສ່ວນປະກອບ ແລະ ເຄື່ອງອາໄຫລ່ປ່ຽນຖ່າຍໃນແຕ່ລະຄັ້ງ ແມ່ນໃຫ້ມອບເປັນເງິນກີບ ແລະປະຕິບັດດັ່ງນີ້:**

1. ສຳລັບການນຳເຂົ້າຍານພາຫະນະ, ສິ້ນສ່ວນປະກອບ ແລະ ເຄື່ອງອາໄຫລ່ປ່ຽນຖ່າຍຍານພາຫະນະແມ່ນໃຫ້ຄິດໄລ່ເກັບ ແລະ ມອບອາກອນໃຫ້ຄົບຖ້ວນຢູ່ດ່ານພາສີຊາຍແດນ ກ່ອນນຳສິນຄ້າອອກຈາກດ່ານພາສີ ຫຼື ສາງ.
2. ສຳລັບຜູ້ດຳເນີນທຸລະກິດ ການຜະລິດ ຫຼື ປະກອບ ຍານພາຫະນະ ຢູ່ ສປປ ລາວ ທີ່ໄດ້ມອບອາກອນຊົມໃຊ້ ໃນເວລານຳເຂົ້າສິ້ນສ່ວນປະກອບ ແລະ ເຄື່ອງອາໄຫລ່ປ່ຽນຖ່າຍ ຢູ່ດ່ານບ່ອນນຳເຂົ້າແລ້ວ ແມ່ນບໍ່ໄດ້ມອບອາກອນຊົມໃຊ້ຢູ່ພາຍໃນຕື່ມອີກ. ຜູ້ດຳເນີນທຸລະກິດການຜະລິດສິ້ນສ່ວນປະກອບ, ເຄື່ອງອາໄຫລ່ປ່ຽນຖ່າຍ ຢູ່ພາຍໃນຕ້ອງມອບອາກອນຊົມໃຊ້ ບໍ່ໃຫ້ກາຍວັນທີ 15 ຂອງເດືອນຖັດໄປ ຕໍ່ຂະແໜງການສ່ວຍສາອາກອນບ່ອນທີ່ຕົນຂຶ້ນກັບ.

11. ບັນດາມາດຕະການຈັດຕັ້ງປະຕິບັດລະອຽດ ດັ່ງນີ້:

11.1 ເລີ່ມແຕ່ວັນທີ 01 ທັນວາ 2015 ເປັນຕົ້ນໄປ ແມ່ນໃຫ້ເລີ່ມຈັດຕັ້ງປະຕິບັດທົດລອງວັດຕາອາກອນຊົມໃຊ້ຍານພາຫະນະ, ສິ້ນສ່ວນປະກອບ, ເຄື່ອງອາໄຫລ່ປ່ຽນຖ່າຍ ຕາມຄຳແນະນຳສະບັບນີ້;

11.2 ໃຫ້ລົບລ້າງການຈັດຕັ້ງປະຕິບັດແຈ້ງການຂອງກະຊວງການເງິນ ສະບັບເລກທີ 2320/ກງ, ລົງວັນທີ 22 ທັນວາ 2003 ແລະສະບັບເລກທີ 0325/ກງ, ລົງວັນທີ 15 ກຸມພາ 2010 ແລະແຈ້ງການອື່ນທີ່ໄດ້ກຳນົດກ່ຽວກັບລາຄາກາງສຳລັບການນຳເຂົ້າ ຍານພາຫະນະ ທີ່ເປັນພື້ນຖານໃນການຄິດໄລ່ຄ່າພາສີ-ອາກອນ ນຳເຂົ້າ.

11.3 ການນຳເຂົ້າຍານພາຫະນະທຸກປະເພດ, ສິ້ນສ່ວນປະກອບ, ອາໄຫລ່ປ່ຽນຖ່າຍຍານພາຫະນະ ແມ່ນໃຫ້ນຳໃຊ້ລາຄາຊື້-ຂາຍຕົວຈິງ ຕາມທີ່ກຳນົດໄວ້ໃນມາດຕາ 13 ຂອງກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະບົດແນະນຳກະຊວງການເງິນ ສະບັບເລກທີ 1537/ກງ, ລົງວັນທີ 4 ມິຖຸນາ 2012.

11.4 ການນຳເຂົ້າຍານພາຫະນະທຸກປະເພດ, ສິ້ນສ່ວນປະກອບ, ອາໄຫລ່ປ່ຽນຖ່າຍພາຫະນະ ມາຈາກບັນດາປະເທດອາຊຽນ, ອາຊຽນບວກ 6 ແລະບັນດາປະເທດສະມາຊິກ

ອົງການການຄ້າໂລກ ແມ່ນໃຫ້ປະຕິບັດຕາມອັດຕາພາສີຫລຸດຜ່ອນ ທີ່ ສປປ ລາວ ໄດ້ໃຫ້ສັດຕະຍາບັນ.

12. ມອບໃຫ້ກົມພາສີ, ກົມສ່ວຍສາອາກອນ, ບັນດາຂະແໜງການທີ່ກ່ຽວຂ້ອງ, ຈັດຕັ້ງເຜີຍແຜ່ ຄໍາແນະນໍາສະບັບນີ້ໃຫ້ ບຸກຄົນ, ນິຕິບຸກຄົນ ແລະການຈັດຕັ້ງ ເພື່ອຮັບຮູ້ ແລະໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດຄໍາແນະນໍາສະບັບນີ້ຕາມໜ້າທີ່ຂອງໃຜລາວ ຢ່າງເຂັ້ມງວດ.

13. ບັນດາ ບໍລິສັດ ນໍາເຂົ້າ, ຜະລິດ, ປະກອບ ແລະ ຈໍາໜ່າຍ ຍານພາຫະນະ, ສິ້ນສ່ວນປະກອບ ແລະອາໄຫລ່ປ່ຽນຖ່າຍ ຕ້ອງໃຫ້ການຮ່ວມມືກັບເຈົ້າໜ້າທີ່ພາສີ ແລະສ່ວຍສາອາກອນ ໃນການຈັດຕັ້ງປະຕິບັດຄໍາແນະນໍາສະບັບນີ້ ເຊັ່ນ:
    - ສະໜອງຂໍ້ມູນກ່ຽວກັບລາຄາຊື້-ຂາຍຕົວຈິງ ແລະຄ່າໃຊ້ຈ່າຍຕ່າງໆຕິດພັນກັບການຊື້-ຂາຍ: ຄ່າຂົນສົ່ງ, ຄ່າປະກັນໄພ, ຄ່າຫຸ້ມຫໍ່ ແລະອື່ນທີ່ກ່ຽວຂ້ອງ;
    - ບໍລິສັດ ຕ້ອງປະຕິບັດມາດຖານ ແລະເງື່ອນໄຂ ຕາມລະບຽບການຂໍສ້າງຕັ້ງ ແລະດໍາເນີນທຸລະກິດ ແລະກົດໝາຍວ່າດ້ວຍສ່ວຍສາອາກອນ;
    - ບໍລິສັດ ຕ້ອງແຈ້ງລາຄາຂາຍຕາມແຜນການຈໍາໜ່າຍຍານພາຫະນະແຕ່ລະປະເພດທີ່ນໍາເຂົ້າ, ຜະລິດປະກອບຢູ່ພາຍໃນປະເທດ ແລະຖ້າລາຄາຂາຍຫາກມີການປ່ຽນແປງກໍຕ້ອງແຈ້ງເປັນແຕ່ລໄລຍະ, ແຕ່ເວລາຈໍາໜ່າຍໃຫ້ແຕ່ລະລູກຄ້າບໍລິສັດຕ້ອງອອກໃບເກັບເງິນຕາມລາຄາຊື້-ຂາຍຕົວຈິງ,ຖືບັນຊີ ແລະແຈ້ງເສຍອາກອນໃຫ້ຖືກຕ້ອງຕາມລະບຽບກົດໝາຍກໍານົດ.
    - ລະບົບຂໍ້ມູນຂ່າວສານ ( IT ) ຂອງບັນດາບໍລິສັດ ທີ່ນໍາເຂົ້າ ແລະຈໍາໜ່າຍພາຫະນະ ຢູ່ ສປປ ລາວ ຕ້ອງສາມາດເຊື່ອມໂຍງກັບລະບົບຂໍ້ມູນຂ່າວສານ ( IT ) ກັບຂະແໜງພາສີ ແລະສ່ວຍສາອາກອນ.

14. ມອບໃຫ້ກົມພາສີ ແນະນໍາ ບັນດາດ່ານພາສີສາກົນທົ່ວປະເທດກວດກາ ສັງລວມບັນດາຍານພາຫະນະ, ສິ້ນສ່ວນປະກອບ, ອາໄຫລ່ປ່ຽນຖ່າຍ ທີ່ນໍາເຂົ້າມາ ແຕ່ຍັງບໍ່ທັນແຈ້ງພາສີລາຍລະອຽດ ກ່ອນວັນທີ 1 ທັນວາ 2015 ເພື່ອນໍາໃຊ້ບັນດາມາດຕະການ ທີ່ກໍານົດໄວ້ໃນກົດໝາຍ ແລະລະບຽບການ ຢ່າງເຂັ້ມງວດ.

15. ຄໍາແນະນໍາສະບັບນີ້ ມີຜົນສັກສິດ ແລະນໍາໃຊ້ ນັບແຕ່ ວັນທີ 01 ທັນວາ 2015 ເປັນຕົ້ນໄປ.

**ລັດຖະມົນຕີວ່າການກະຊວງການເງິນ**

ດຣ ລຽນ ທິແກ້ວ